# ການຈັດການ ແລະ ຄວບຄຸມໂຕມອດກາເຟ
# ສວນກາເຟທີ່ສະອາດໝາຍເຖິງກາເຟທີ່ມີຄຸນະພາບສູງ



## ໂຕມອດກາເຟແມ່ນຫຍັງ?
## ຮູບພາບທີ່ບົ່ງບອກລັກສະນະ:



ກ: ໝາກກາເຟທີ່ຖືກໂຕມອດ ທຳລາຍຄາພວງ



ຂ: ພາບຖ່າຍໄລຍະໃກ້ກາເຟ ໝາກແດງທີ່ເລີ່ມມີຮູເຈາະ



ຄ: ກາເຟໝາກຂາວທີ່ມີຮູໂຕມອດ ເຈາະ



ງ: ໝາກກາເຟທີ່ປອກອອກມາມີ ໂຕມອດຢູ່ທາງໃນ (ສະແດງ ໃຫ້ເຫັນຂະໜາດຂອງໂຕມອດ)



ຈ: ເມັດກາເຟຂຽວທີ່ຖືກໂຕ ມອດເຈາະທຳລາຍ

***ໝາຍເຫດ:*** *ໂຕມອດເປັນສັດຕູພືດທີ່ນ້ອຍແຕ່ສາມາດສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ, ມອດແມ່ໂຕໜຶ່ງສາມາດວາງໄຂ່ໄດ້ 100 ໜ່ວຍ ແລະ ໄຂ່ແຕ່ລະໜ່ວຍສາມາດກາຍເປັນໂຕມອດ ພາຍໃນໄລຍະເວລາບໍ່ຮອດໜຶ່ງເດືອນ. ໂຕມອດຈະສືບຕໍ່ແພ່ພັນຖ້າຫາກປະ ໝາກກາເຟແຫ້ງໄວ້ຕາມຕົ້ນກາເຟ ຫຼື ຕາມພື້ນດິນໃນສວນກາເຟພາຍຫຼັງການເກັບກູ້ຜົນຜະລິດ, ດັ່ງນັ້ນຊາວສວນຕ້ອງເອົາໃຈໃສ່ກຳຈັດວົງຈອນຊີວິດຂອງພວກມັນໃນຊ່ວງໄລຍະຫຼັງການເກັບກ່ຽວຈົນຮອດລະດູການໃໝ່*

## ເປັນຫຍັງຕ້ອງຈັດການຄວບຄຸມໂຕມອດ?




- ເມັດກາເຟທີ່ຖືກໂຕມອດເຈາະ ຫຼື ທຳລາຍຈະໄດ້ລາຄາຕ່ຳ ຫຼື ອາດຖືກປະຕິເສດຈາກຜູ້ຊື້
- ຫາກບໍ່ມີການຈັດການຄວບຄຸມໂຕມອດກາເຟ, ບັນຫາ ກໍ່ຈະລຸກລາມຮ້າຍແຮງຂຶ້ນ ແລະ ອາດນຳໄປ ສູ່ການເຮັດໃຫ້ຊາວສວນກາເຟມີລາຍຮັບຫຼຸດລົງ

## ວິທີການຈັດການຄວບຄຸມໂຕມອດເຈາະກາເຟຕ້ອງເຮັດແນວໃດ?

ການຮັກສາສວນກາເຟໃຫ້ສະອາດແມ່ນສິ່ງທີ່ສຳຄັນທີ່ສຸດທີ່ຕ້ອງຄວບຄຸມ, ໝາກກາເຟທີ່ແຫ້ງຄາຕົ້ນ ຫຼື ລົ່ນລົງພື້ນດິນ ເປັນແຫຼ່ງອາໄສສຳລັບໂຕມອດ, ດັ່ງນັ້ນການນຳໃຊ້ບັນດາວິທີການດັ່ງຕໍ່ໄປນີ້ຈຶ່ງຈຳເປັນສຳລັບຊາວສວນກາເຟທຸກຄົນ:





- ໃຫ້ເກັບ ແລະ ທຳລາຍໝາກກາເຟທີ່ລົ່ນລົງດິນ ຫຼື ໝາກແຫ້ງສຸກຄາຕົ້ນ



- ຫຼັງຈາກສຳເລັດການເກັບກູ້ໝາກກາເຟແລ້ວ ຕ້ອງປົດໝາກທີ່ເຫຼືອຄ້າງເທິງຕົ້ນກາເຟຖິ້ມໃຫ້ໝົດ.



- ຕ້ອງຕັດແຕ່ງຕົ້ນກາເຟພາຍຫຼັງການເກັບກູ້ສຳເລັດແລ້ວ, ຕ້ອງຕັດຍອດກາເຟທີ່ສູງເກີນໄປເພື່ອສະດວກໃນການເກັບ.



- ຕັດຕົ້ນກາເຟແກ່ ຫຼື ຕົ້ນທີ່ປະຮ້າງຖິ້ມໄວ້ (ຕັດລຳຕົ້ນລົງຈົ່ງປະມານ 20-30 ຊັງຕີແມັດ)

**ໝາຍເຫດ:**

- ຕ້ອງເອົາໃຈໃສ່ຮັກສາອະນາໄມເຄື່ອງນຸ່ງຂອງຖື ແລະ ອຸປະກອນເຊັ່ນ: ເປົາປ່ານ ແລະ ກະບຸງໃຫ້ສະອາດສະເໝີ ທັງກ່ອນ ແລະ ຫຼັງອອກສວນ ເພາະເຄື່ອງຂອງເຫຼົ່ານີ້ສາມາດເຄື່ອນຍ້າຍໂຕມອດຈາກສວນໜຶ່ງໄປຫາສວນອື່ນ.
- ບໍ່ຄວນປູກຕົ້ນກາເຟຫຼາຍເກີນທີ່ເຈົ້າຂອງສາມາດບົວລະບັດຮັກສາໄດ້, ຖ້າຄຸ້ມຄອງບົວລະບັດຮັກສາໄດ້ບໍ່ດີ ຈະເຮັດໃຫ້ຄຸນະພາບກາເຟຕ່ຳ, ຖ້າຄຸນະພາບຕ່ຳ ກໍ່ຈະໄດ້ຮັບລາຄາຕ່ຳ

## ວິທີການທຳລາຍໝາກກາເຟທີ່ຖືກໂຕມອດເຈາະ?

ໝາກກາເຟທີ່ຖືກໂຕມອດເຈາະ ຈະຕ້ອງທຳລາຍຖິ້ມເພື່ອປ້ອງກັນບໍ່ໃຫ້ໂຕມອດແຜ່ລາມອອກ ສາມາດນຳໃຊ້ວິທີການໃດໜຶ່ງດັ່ງລຸ່ມນີ້:



ກາເຟທີ່ຖືກມອດທຳລາຍ

- ເອົາໝາກກາເຟທີ່ມີມອດເຈາະໄປຕົ້ມໃນນ້ຳໃຫ້ຟົດປະມານ 10 ນາທີ




- ໃຫ້ແຊ່ໝາກກາເຟທີ່ຖືກໂຕມອດເຈາະໃນຄຸທີ່ມີນ້ຳແຟັບເປັນເວລາ 24 ຊົ່ວໂມງ.



- ເອົາໝາກກາເຟໃສ່ໃນຄຸທີ່ບໍ່ໃສ່ນ້ຳແລ້ວເອົາໄປຕາກແດດຢ່າງນ້ອຍ 2 ອາທິດ, ແຕ່ຕ້ອງເອົາຝາອັດໄວ້ ເພື່ອປ້ອງກັນບໍ່ໃຫ້ໂຕມອດໜີອອກມາໄດ້.




- ໃຫ້ນຳເອົາໝາກກາເຟທີ່ຖືກໂຕມອດເຈາະໄປຝັງຖິ້ມ ໂດຍຂຸດຂຸມຝັງແລ້ວຖົມດິນໃຫ້ແຈບຢ່າງນ້ອຍ 15 ຊັງຕີແມັດ.

**ໝາຍເຫດ:**
ພາຍຫຼັງທີ່ແນ່ໃຈວ່າໂຕມອດກາເຟຖືກຂ້າຕາຍໝົດແລ້ວ, ສາມາດນຳໃຊ້ໝາກເຫຼົ່ານັ້ນໄປເຮັດເປັນຝຸ່ນບົ່ມໄດ້.

## ວິທີການອື່ນໆທີ່ຕ້ອງເຮັດເພື່ອຄວບຄຸມໂຕມອດກາເຟມີຫຍັງແນ່?

ໂຄງການ LURAS ກຳລັງຊ່ວຍຊາວສວນເຮັດການທົດລອງ ສອງວິທີການຄວບຄຸມດັ່ງລຸ່ມນີ້:

- ນຳໃຊ້ກັບດັກຈັບທີ່ເຮັດເອງທີ່ສາມາດດຶງດູງ ແລະ ຂ້າໂຕມອດກາເຟ
- ນຳໃຊ້ເຊື້ອລາ ທີ່ເອີ້ນວ່າ ໂບວາຣິອາ ທີ່ສາມາດຂ້າໂຕມອດກາເຟ ໄປສີດໃສ່

ຜົນຈາກການທົດລອງຈະໄດ້ເຜີຍແຜ່ໃຫ້ຊາວສວນຊາບພາຍຫຼັງ, ແຕ່ການນຳໃຊ້ວິທີການເຫຼົ່ານີ້ ຈະໄດ້ຮັບຜົນສະເພາະແຕ່ໃນສວນທີ່ຮັກສາຄວາມສະອາດໄດ້ເທົ່ານັ້ນ. ບັນດາວິທີການທີ່ຕ້ອງເຮັດເພື່ອຈັດການ ແລະ ຄວບຄຸມທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ ຈະຕ້ອງໄດ້ປະຕິບັດຕາມຢ່າງເຄັ່ງຄັດ.

ສະໜັບສະໜູນໂດຍ:
ບໍລິການ-ສົ່ງເສີມກະສິກຳຮອບດ້ານ ບສກຮ LURAS Lao Upland Rural Advisory Service

ຂໍ້ມູນເພີ່ມເຕີມກ່ຽວກັບ ກາເຟຊຸມຊົນແກ່ວແສດ ສາມາດເຂົ້າເບິ່ງໄດ້ທີ່: www.laocoffee.org